ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ

ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

ສະພາປະຊາຊົນແຂວງ ໄຊຍະບູລີ

ເລກທີ .80/ສພຂ.ຊຍ

ໄຊຍະບູລີ, ວັນທີ 26.ກໍລະກົດ 2024.

# ມະຕິ

## ກອງປະຊຸມສະພາປະຊາຊົນແຂວງ

## ວ່າດ້ວຍການຮັບຮອງເອົາບົດລາຍງານການເຄື່ອນໄຫວ

## ວຽກງານໃນໄລຍະແຕ່ກອງປະຊຸມສະໄໝສາມັນ ເທື່ອທີ 6 ຫາ ເທື່ອທີ 7

## ແລະ ແຜນການຮອດກອງປະຊຸມສະໄໝສາມັນ ເທື່ອທີ 8 ຂອງສະພາປະຊາຊົນແຂວງ ຊຸດທີ II

- ອີງຕາມ ກົດໝາຍ ວ່າດ້ວຍການປັບປຸງບາງມາດຕາ ຂອງກົດໝາຍ ວ່າດ້ວຍສະພາແຫ່ງຊາດ ແລະ ກົດໝາຍ ວ່າດ້ວຍສະພາປະຊາຊົນຂັ້ນແຂວງ ສະບັບເລກທີ 82/ສພຊ, ລົງວັນທີ 30 ມິຖຸນາ 2020 ມາດຕາ 60 ກອງປະຊຸມສະໄໝສາມັນປະຈຳ 6 ເດືອນຂອງສະພາປະຊາຊົນຂັ້ນແຂວງ.
- ອີງຕາມ ແຜນວຽກງານຈຸດສຸມ 6 ເດືອນຕົ້ນປີ 2024 ຂອງຄະນະປະຈຳສະພາປະຊາຊົນແຂວງໄຊຍະບູລີ ສະບັບເລກທີ 40/ຄປຈ.ຊຍ, ລົງວັນທີ 18 ມັງກອນ 2024.
- ອີງຕາມ ບົດລາຍງານ ການເຄື່ອນໄຫວວຽກງານແຕ່ກອງປະຊຸມສະໄໝສາມັນ ເທື່ອທີ 6 ຫາ ເທື່ອທີ 7 ແລະ ແຜນການຮອດກອງປະຊຸມສະໄໝສາມັນ ເທື່ອທີ 8 ຂອງຄະນະປະຈຳສະພາປະຊາຊົນແຂວງ ໃນຄັ້ງວັນທີ 26 ກໍລະກົດ 2024.

ຜ່ານການພິຈາລະນາ ຂອງສະມາຊິກສະພາປະຊາຊົນແຂວງ ຕໍ່ບົດລາຍງານການເຄື່ອນໄຫວວຽກ ແຕ່ກອງປະຊຸມສະໄໝສາມັນ ເທື່ອທີ 6 ຫາ ເທື່ອທີ 7 ແລະ ແຜນການຮອດກອງປະຊຸມສະໄໝສາມັນ ເທື່ອທີ 8 ຂອງຄະນະປະຈຳສະພາປະຊາຊົນແຂວງ

ກອງປະຊຸມ ຕົກລົງ:

ມາດຕາ 1 ຮັບຮອງເອົາບົດລາຍງານການເຄື່ອນໄຫວວຽກງານໃນໄລຍະແຕ່ກອງປະຊຸມສະໄໝສາມັນ ເທື່ອທີ 6 ຫາ ເທື່ອທີ 7 ດັ່ງນີ້:

1) **ດ້ານນິຕິກຳ:** ໄດ້ນຳພາຈັດຕັ້ງການປະເມີນລັດຖະທຳມະນູນ, ຈັດຕັ້ງການເຜີຍແຜ່ກົດໝາຍ ວ່າດ້ວຍການແກ້ໄຂຄຳຮ້ອງທຸກ ປີ 2022 ແລະ ທາບທາມຮ່າງກົດໝາຍ ເພື່ອກະກຽມນຳເຂົ້າພິຈາລະນາຮັບຮອງ ໃນກອງປະຊຸມສະໄໝສາມັນ ເທື່ອທີ 8 ຂອງສະພາແຫ່ງຊາດ ຊຸດທີ IX 13 ສະບັບ, ປະກອບຄຳເຫັນ ໃສ່ຮ່າງໂຄງການການເມືອງຂອງພັກປະຊາຊົນປະຕິວັດລາວ, ຮ່າງກົດໝາຍ ແລະ ນິຕິກຳໃຕ້ກົດໝາຍ 9 ສະບັບ.

2) **ດ້ານການຕົກລົງບັນຫາສຳຄັນຂອງທ້ອງຖິ່ນ:** ຄົ້ນຄວ້າພິຈາລະນາຕົກລົງບັນຫາສຳຄັນພື້ນຖານຂອງແຂວງ ຜ່ານກົນໄກການດຳເນີນກອງປະຊຸມສະໄໝສາມັນຂອງສະພາປະຊາຊົນແຂວງ ແລະ ກອງປະຊຸມຄະນະປະຈຳສະພາປະຊາຊົນແຂວງ 31 ເນື້ອໃນ, ຮັບຮອງເປັນມະຕິ 21 ສະບັບ, ຮັບຮອງເອົາການແຕ່ງຕັ້ງຍົກຍ້າຍບຸກຄະລາກອນ ຕາມການສະເໜີຂອງທ່ານເຈົ້າແຂວງ ມີ 10 ທ່ານ, ໃນນີ້ ສະມາຊິກສະພາປະຊາຊົນແຂວງ ປະຈຳເຂດເລືອກຕັ້ງ 3 ທ່ານ; ຈັດຕັ້ງ ການປະເມີນ ແລະ ໃຫ້ຄະແນນຕໍ່ບຸກຄະລາກອນທີ່ລາຍງານ, ຊີ້ແຈງ ແລະ ຕອບຄຳຊັກຖາມ ຕໍ່ກອງປະຊຸມສະໄໝສາມັນເທື່ອທີ 6 ມີເປົ້າໝາຍທີ່ຖືກປະເມີນ 27 ທ່ານ, ຍິງ 4 ທ່ານ;

3) **ດ້ານການຕິດຕາມກວດກາ:** ໄດ້ລົງຕິດຕາມກວດກາ ແລະ ຊຸກຍູ້ອົງການປົກຄອງແຕ່ລະຂັ້ນ ໃນການປະຕິບັດລັດຖະທຳມະນູນ, ກົດໝາຍ, ນິຕິກຳໃຕ້ກົດໝາຍ ແລະ ມະຕິກອງປະຊຸມສະພາປະຊາຊົນແຂວງ ໄດ້ທັງໝົດ 9 ຄັ້ງ; ໄດ້ເກັບກຳສັງລວມ, ວິເຄາະ -ວິໄຈຂໍ້ມູນ ຄຳສະເໜີ ແລະ ສາຍດ່ວນຂອງປະຊາຊົນບັນດາເຜົ່າ ສົ່ງໃຫ້ອົງການແຂວງ ຄົ້ນຄວ້າຊີ້ແຈງແກ້ໄຂ ລວມມີ 75 ເນື້ອໃນ ຍັງຄ້າງ 18 ເນື້ອໃນ ມີ 7 ພາກສ່ວນ; ໄດ້ຮັບຄຳຮ້ອງຂໍຄວາມເປັນທຳ ລວມ 7 ເລື່ອງແກ້ໄຂ 7 ເລື່ອງ, ຕ້ອນຮັບ ແລະ ໃຫ້ຄຳປຶກສາດ້ານກົດໝາຍແກ່ປະຊາຊົນໄດ້ 5 ຄັ້ງ, ມີ 8 ເທື່ອຄົນ, ຍິງ 4 ເທື່ອຄົນ;

4) **ດ້ານການສ້າງຄວາມເຂັ້ມແຂງໃຫ້ສະພາປະຊາຊົນແຂວງ:** ໄດ້ເຂົ້າຮ່ວມກອງປະຊຸມຝຶກອົບຮົມຍົກສູງຂີດຄວາມ

ສາມາດດ້ານຕ່າງໆໃຫ້ແກ່ສະມາຊິກສະພາປະຊາຊົນແຂວງ ແລະ ພະນັກງານຊ່ວຍວຽກ ໄດ້ 18 ຄັ້ງ, ມີ 17 ຫົວຂໍ້, ແຕ່ງຕັ້ງ, ຍົກຍ້າຍ ບ່ອນປະຈຳການຂອງພະນັກງານຊ່ວຍວຽກພາຍໃນສະພາປະຊາຊົນແຂວງ ແລະ ຄະນະສະມາຊິກສະພາປະຊາຊົນແຂວງ ປະຈຳເຂດເລືອກຕັ້ງເມືອງ ລວມມີ 9 ທ່ານ, ຍິງ 1 ທ່ານ;

5) **ການເຄື່ອນໄຫວວຽກງານຂອງສະມາຊິກສະພາປະຊາຊົນແຂວງ ປະຈຳເຂດເລືອກຕັ້ງ:** ໄດ້ລົງເຜີຍແຜ່ຜົນສຳເລັດກອງປະຊຸມສະໄໝສາມັນ ເທື່ອທີ 6 ຂອງສະພາແຫ່ງຊາດ ຊຸດທີ IX ແລະ ສະພາປະຊາຊົນແຂວງ ຊຸດທີ II ໄດ້ທັງໝົດ 56 ຈຸດ, ໃນນີ້ ສຳນັກງານ, ກົມກອງ 19 ຈຸດ, ບ້ານ 37 ຈຸດ; ມີຜູ້ເຂົ້າຮ່ວມ ທັງໝົດ 6.812 ຄົນ, ຍິງ 2.632 ຄົນ; ພ້ອມນັ້ນຍັງໄດ້ນຳເອົາວັດຖຸປັດໃຈ ໄປມອບໃຫ້ແກ່ຜູ້ມີສິດເລືອກຕັ້ງ ລວມມູນຄ່າທັງໝົດ **226.500.000** ກີບ ( ສອງຮ້ອຍຊາວຫົກລ້ານຫ້າແສນກີບ);

6) **ການເຄື່ອນໄຫວວຽກງານການຕ່າງປະເທດ:** ປະສານສົມທົບກັບ ສະພາແຫ່ງຊາດ ແລະ ອົງການປົກຄອງແຂວງ ພົບປະແລກປ່ຽນບົດຮຽນ ແລະ ພິທີສຳຄັນຕ່າງໆ ຮ່ວມກັບ ສສ ຫວຽດນາມ ໄດ້ 6 ຄັ້ງ.

**ມາດຕາ 2 ຮັບຮອງເອົາທິດທາງແຜນການເຄື່ອນໄຫວວຽກງານຮອດກອງປະຊຸມສະໄໝສາມັນ ເທື່ອທີ 8 ຂອງສະພາປະຊາຊົນແຂວງ ຊຸດທີ II.**

ກອງປະຊຸມເຫັນດີ ຮັບຮອງເອົາທິດທາງແຜນການ ເຄື່ອນໄຫວວຽກງານ ຮອດກອງປະຊຸມສະໄໝສາມັນ ເທື່ອທີ 8 ດັ່ງນີ້:

1. ດ້ານນິຕິກຳ

ສືບຕໍ່ປະສານສົມທົບ ກັບ ຄະນະປະຈຳສະພາແຫ່ງຊາດ ທາບທາມຮ່າງກົດໝາຍ 8 ສະບັບ ໃນນີ້: ກົດໝາຍສ້າງໃໝ່ 3 ສະບັບ, ປັບປຸງ 5 ສະບັບ ; ຊຸກຍູ້ອົງການປົກຄອງແຂວງ ປະເມີນ ແລະ ປັບປຸງນິຕິກຳໃຕ້ກົດໝາຍ ໃຫ້ບັນລຸ 3 ສະບັບ ເປັນຕົ້ນແມ່ນ: ຂໍ້ຕົກລົງຂອງທ່ານເຈົ້າແຂວງ ວ່າດ້ວຍການນຳໃຊ້ງົບປະມານຂອງລັດ, ຂໍ້ຕົກລົງຂອງເຈົ້າແຂວງ ວ່າດ້ວຍການສະກັດກັ້ນ ແລະ ຕ້ານຢາເສບຕິດ, ຂໍ້ຕົກລົງ ວ່າດ້ວຍການຄຸ້ມຄອງ ແລະ ນຳໃຊ້ທີ່ດິນກະສິກຳ.

2. ດ້ານການຕົກລົງບັນຫາສຳຄັນຂອງທ້ອງຖິ່ນ.

ສະພາປະຊາຊົນແຂວງ ຈະໄດ້ຄົ້ນຄວ້າ, ພິຈາລະນາ ຮັບຮອງເອົາເນື້ອໃນຕ່າງໆ ຜ່ານກົນໄກການດຳເນີນກອງປະຊຸມສະພາປະຊາຊົນແຂວງ ແລະ ກອງປະຊຸມຄະນະປະຈຳສະພາປະຊາຊົນແຂວງ ດັ່ງນີ້:

2.1. ກອງປະຊຸມສະໄໝສາມັນ ເທື່ອທີ 8 ຂອງສະພາປະຊາຊົນແຂວງ ຊຸດທີ II ມີເນື້ອໃນຕົ້ນຕໍ ດັ່ງນີ້:

1) ພິຈາລະນາ ແລະ ຮັບຮອງເອົາບົດລາຍງານຂອງທ່ານເຈົ້າແຂວງ ກ່ຽວກັບການຈັດຕັ້ງປະຕິບັດ ແຜນພັດທະນາເສດຖະກິດ-ສັງຄົມ, ແຜນງົບປະມານແຫ່ງລັດຂອງແຂວງ ປະຈຳປີ 2024 ແລະ ແຜນພັດທະນາເສດຖະກິດ-ສັງຄົມ, ແຜນງົບປະມານແຫ່ງລັດຂອງແຂວງ ໃນປີ 2025;

2) ພິຈາລະນາ ແລະ ຮັບຮອງເອົາບົດລາຍງານ ຜົນຂອງການກວດສອບຄືນ ແລະ ບົດສະຫຼຸບງົບປະມານຂາດຕົວ ປະຈຳປີ 2023 ແລະ ແຜນການເຄື່ອນໄຫວ ປະຈຳປີ 2024 ຂອງອົງການກວດສອບປະຈຳພາກເໜືອ 1;

3) ພິຈາລະນາ ແລະ ຮັບຮອງເອົາບົດລາຍງານການຈັດຕັ້ງປະຕິບັດແຜນການເຄື່ອນໄຫວວຽກງານປະຈຳປີ 2023 ແລະ ແຜນການເຄື່ອນໄຫວວຽກງານປະຈຳປີ 2024 ຂອງອົງການກວດກາລັດແຂວງ; ບົດລາຍງານຜົນການກວດກາ ຕາມຜົນຂອງການກວດສອບ ປະຈຳປີ 2023;

4) ພິຈາລະນາ ແລະ ຮັບຮອງ ເອົາບົດລາຍງານ ກ່ຽວກັບການຈັດຕັ້ງປະຕິບັດ ແຜນການເຄື່ອນໄຫວວຽກງານປະຈຳປີ 2024 ແລະ ທິດທາງແຜນການເຄື່ອນໄຫວວຽກງານ ປະຈຳປີ 2025 ຂອງອົງການໄອຍະການປະຊາຊົນແຂວງ ແລະ ສານປະຊາຊົນແຂວງ;

5) ຮັບຟັງການລາຍງານການຈັດຕັ້ງປະຕິບັດວາລະແຫ່ງຊາດ ກ່ຽວກັບການແກ້ໄຂບັນຫາຢາເສບຕິດ ປະຈຳປີ 2024, ທິດທາງແຜນການ ປະຈຳປີ 2025 ແລະ ວຽກງານໃດໜຶ່ງ ຂອງອົງການປົກຄອງແຂວງ;

6) ພິຈາລະນາ ແລະ ຮັບຮອງ ເອົາບົດລາຍງານ ກ່ຽວກັບການຈັດຕັ້ງປະຕິບັດ ແຜນການເຄື່ອນໄຫວວຽກງານ ປະຈຳປີ 2024 ແລະ ທິດທາງແຜນການເຄື່ອນໄຫວວຽກງານ ປະຈຳປີ 2025 ຂອງສະພາປະຊາຊົນແຂວງ;

7) ຮັບຟັງການປະກອບຄຳເຫັນຂອງ ອົງການແນວລາວສ້າງຊາດແຂວງ ຕໍ່ບົດລາຍງານຂອງສະພາປະຊາຊົນແຂວງ;

8) ພິຈາລະນາ ແລະ ຮັບຮອງເອົາການສ້າງ ແລະ ປັບປຸງນິຕິກຳໃຕ້ກົດໝາຍຂອງແຂວງ 3 ສະບັບ;

9) ຈັດຕັ້ງການປະເມີນ ແລະ ໃຫ້ຄະແນນ ຕໍ່ຄວາມຮັບຜິດຊອບຂອງບຸກຄະລາກອນ ທີ່ຂຶ້ນລາຍງານ, ຊີ້ແຈງ ແລະ ຕອບຄໍາຊັກຖາມ ໃນກອງປະຊຸມສະພາປະຊາຊົນແຂວງ;

10) ພິຈາລະນາບັນຫາອື່ນໆ ຕາມການຕົກລົງຂອງຄະນະປະຈໍາສະພາປະຊາຊົນແຂວງ.

**2.2. ກອງປະຊຸມຄະນະປະຈໍາສະພາປະຊາຊົນແຂວງ.**

1) ຊີ້ນໍາການເປັນເຈົ້າການຄົ້ນຄວ້າບັນດາເນື້ອໃນທີ່ຈະນໍາເຂົ້າໃນກອງປະຊຸມຄະນະປະຈໍາສະພາປະຊາຊົນແຂວງ ເພື່ອຮັບປະກັນການພິຈາລະນາຕົກລົງບັນຫາສໍາຄັນພື້ນຖານຂອງແຂວງ ໃຫ້ສອດຄ່ອງກັບແນວທາງນະໂຍບາຍຂອງພັກ, ລັດຖະທໍາມະນູນ, ກົດໝາຍ ແລະ ນິຕິກໍາໃຕ້ກົດໝາຍ ຕາມການສະເໜີ ຂອງອົງການປົກຄອງແຂວງ ຕິດພັນກັບການກໍານົດແຜນວຽກຈຸດສຸມຂອງສະພາປະຊາຊົນແຂວງ ແລະ ພາກສ່ວນກ່ຽວຂ້ອງ.

2) ກະກຽມເນື້ອໃນເພື່ອດໍາເນີນກອງປະຊຸມຮ່ວມ ລະຫວ່າງ ສະພາປະຊາຊົນແຂວງ ກັບ ຄະນະສະມາຊິກສະພາແຫ່ງຊາດ ປະຈໍາເຂດເລືອກຕັ້ງທີ 7, ອົງການປົກຄອງແຂວງ ແລະ ຄະນະປະຈໍາແນວລາວສ້າງຊາດ ເພື່ອຕີລາຄາຄືນການຈັດຕັ້ງປະຕິບັດພາລະບົດບາດ, ສິດ ແລະ ໜ້າທີ່ ຕາມກົດໝາຍ ໂດຍສະເພາະແມ່ນບົດບັນທຶກທີ່ໄດ້ເຊັນຮ່ວມກັນ; ດໍາເນີນກອງປະຊຸມຮ່ວມ ລະຫວ່າງ ຄະນະປະຈໍາສະພາປະຊາຊົນແຂວງ ກັບ ຄະນະສະມາຊິກສະພາປະຊາຊົນແຂວງ ປະຈໍາເຂດເລືອກຕັ້ງເມືອງ ເພື່ອຮັບຟັງບັນຫາສໍາຄັນພື້ນຖານຂອງເມືອງ.

**3. ດ້ານການຕິດຕາມກວດກາ.**

ໃນ 6 ເດືອນທ້າຍປີ 2024 ສະພາປະຊາຊົນແຂວງ ຈະໄດ້ສຸມໃສ່ຕິດຕາມກວດກາວຽກງານຕົ້ນຕໍ ດັ່ງນີ້:

3.1) ຕິດຕາມກວດກາການຈັດຕັ້ງປະຕິບັດລັດຖະທໍາມະນູນ, ກົດໝາຍ ແລະ ນິຕິກໍາໃຕ້ກົດໝາຍ ໃນຂົງເຂດສະພາປະຊາຊົນແຂວງ, ປ້ອງກັນຊາດ - ປ້ອງກັນຄວາມສະຫງົບ, ເສດຖະກິດ, ວັດທະນະທໍາ - ສັງຄົມ;

3.2) ຕິດຕາມກວດກາການຈັດຕັ້ງປະຕິບັດມະຕິກອງປະຊຸມສະໄໝສາມັນ ຂອງສະພາແຫ່ງຊາດ ຊຸດທີ IX ແລະ ສະພາປະຊາຊົນແຂວງ ຊຸດທີ II ເປັນຕົ້ນ: ແຜນພັດທະນາເສດຖະກິດ-ສັງຄົມ, ແຜນງົບປະມານແຫ່ງລັດ, ວາລະແຫ່ງຊາດ ວ່າດ້ວຍການແກ້ໄຂບັນຫາຢາເສບຕິດ, ໂຄງການລົງທຶນທີ່ຈັດຕັ້ງປະຕິບັດຫຼ້າຊ້າ, ຫຍຸ້ງຍາກ ສົ່ງຜົນກະທົບຢ່າງຫຼວງຫຼາຍຕໍ່ການດໍາລົງຊີວິດຂອງປະຊາຊົນ; ຕິດຕາມກວດກາແຜນການເຄື່ອນໄຫວຂອງສານປະຊາຊົນແຂວງ, ອົງການໄອຍະການປະຊາຊົນແຂວງ, ອົງການກວດສອບປະຈໍາພາກເໜືອ 1, ອົງການກວດກາລັດແຂວງ, ອົງການສືບສວນ-ສອບ ແລະ ອົງການປະຕິບັດຄໍາຕັດສິນຂອງສານ;

3.3) ຕິດຕາມກວດກາຜ່ານກົນໄກການດໍາເນີນກອງປະຊຸມຮ່ວມ ລະຫວ່າງ ຄະນະປະຈໍາສະພາປະຊາຊົນແຂວງ ກັບອົງການປົກຄອງແຂວງ, ສານປະຊາຊົນແຂວງ, ອົງການໄອຍະການປະຊາຊົນແຂວງ, ອົງການກວດກາລັດແຂວງ ແລະ ຜ່ານກອງປະຊຸມປະຈໍາປີ ຂອງ 3 ຄະນະກໍາມະການ, ຄະນະເລຂາທິການສະພາປະຊາຊົນແຂວງ;

3.4) ຕິດຕາມກວດກາຍຸດທະສາດການສຶກສາ ແລະ ການພັດທະນາຊັບພະຍາກອນມະນຸດຢູ່ຂັ້ນແຂວງ ໃນໄລຍະຜ່ານມາ ແລະ ທິດທາງແຜນການ ໃນຕໍ່ໜ້າ;

3.5) ສືບຕໍ່ຕິດຕາມ, ຊຸກຍູ້ ການຈັດຕັ້ງປະຕິບັດພາລະບົດບາດ, ສິດ ໜ້າທີ່ ຕາມກົດໝາຍ, ມະຕິຄະນະປະຈໍາສະພາປະຊາຊົນແຂວງ ຂອງຄະນະສະມາຊິກສະພາປະຊາຊົນແຂວງ ປະຈໍາເຂດເລືອກຕັ້ງເມືອງ 3 ເມືອງຄື: ເມືອງ ໄຊຍະບູລີ, ເມືອງ ຫົງສາ ແລະ ເມືອງ ທົ່ງມີໄຊ;

3.6) ສືບຕໍ່ຕິດຕາມກວດກາຜ່ານກົນໄກການຮັບ, ພິຈາລະນາ, ແກ້ໄຂຄໍາສະເໜີ, ສາຍດ່ວນ, ຄໍາຮ້ອງຂໍຄວາມເປັນທໍາ ແລະ ຕ້ອນຮັບ ພ້ອມທັງໃຫ້ຄໍາປຶກສາດ້ານກົດໝາຍແກ່ປະຊາຊົນ;

3.7) ຕິດຕາມກວດກາການຈັດຕັ້ງປະຕິບັດໜ້າທີ່ ຂອງບຸກຄະລາກອນ ທີ່ສະພາປະຊາຊົນແຂວງເລືອກຕັ້ງ ແລະ ຮັບຮອງເອົາການແຕ່ງຕັ້ງ ໂດຍຜ່ານການລາຍງານ, ການປະເມີນ ໃນກອງປະຊຸມສະໄໝສາມັນ ເທື່ອທີ 8 ຂອງສະພາປະຊາຊົນແຂວງ ຊຸດທີ II.

**4. ດ້ານການສ້າງຄວາມເຂັ້ມແຂງໃຫ້ແກ່ສະພາປະຊາຊົນແຂວງ.**

4.1) ເຂົ້າຮ່ວມຝຶກອົບຮົມຫົວຂໍ້ຕ່າງໆ ຕາມແຜນຂອງສະພາແຫ່ງຊາດ, ລັດຖະບານ ແລະ ອົງການປົກຄອງແຂວງ; ສືບຕໍ່ຍາດແຍ່ງງົບປະມານຈາກສະພາແຫ່ງຊາດ, ອົງການປົກຄອງແຂວງ ເພື່ອຈັດຝຶກອົບຮົມໃຫ້ສະມາຊິກສະພາປະຊາຊົນແຂວງ ແລະ ບຸກຄະລາກອນຂອງສະພາປະຊາຊົນແຂວງ ໃຫ້ໄດ້ 2 ຄັ້ງ;

4.2) ສືບຕໍ່ເພີ່ມທະວີການປະສານງານ ກັບ ອົງການປົກຄອງ, ແນວລາວສ້າງຊາດ, ສະຫະພັນນັກຮົບເກົ່າ, ອົງການຈັດຕັ້ງມະຫາຊົນ, ອົງການໄອຍະການປະຊາຊົນ, ສານປະຊາຊົນ, ອົງການກວດສອບປະຈຳພາກເໜືອ 1, ອົງການກວດກາລັດແຂວງ ເພື່ອເປັນບ່ອນອີງໃນການເຄື່ອນໄຫວວຽກງານ ໃຫ້ມີຄວາມວ່ອງໄວ, ໂປ່ງໃສ, ຮັບປະກັນການຈັດຕັ້ງປະຕິບັດໜ້າທີ່ວຽກງານມີຄຸນນະພາບ, ສາມາດກວດສອບໄດ້ຄວາມຖືກຕ້ອງທາງດ້ານກົດໝາຍ;

4.3) ສ້າງເງື່ອນໄຂຊຸກຍູ້ຄະນະສະມາຊິກສະພາປະຊາຊົນແຂວງ ປະຈຳເຂດເລືອກຕັ້ງເມືອງ ພົບປະແລກປ່ຽນບົດຮຽນເຊິ່ງກັນ ແລະ ກັນ;

4.4) ຄົ້ນຄວ້າ, ຮຽບຮຽງ ປະຫວັດການເຄື່ອນໄຫວຂອງສະມາຊິກສະພາປະຊາຊົນແຂວງ ຊຸດທີ I ແລະ ຊຸດທີ II.

**5. ດ້ານການເຄື່ອນໄຫວ ຂອງຄະນະສະມາຊິກສະພາປະຊາຊົນແຂວງ ປະຈຳເຂດເລືອກຕັ້ງເມືອງ**

5.1) ຄະນະສະມາຊິກສະພາປະຊາຊົນແຂວງ ປະຈຳເຂດເລືອກຕັ້ງເມືອງ ເປັນເຈົ້າການປະສານສົມທົບ ກັບ ອົງການ ປົກຄອງເມືອງ ສ້າງແຜນລົງເຜີຍແຜ່ຜົນສຳເລັດກອງປະຊຸມສະໄໝສາມັນ ເທື່ອທີ 7 ຂອງສະພາແຫ່ງຊາດ ຊຸດທີ IX ແລະ ສະພາປະຊາຊົນແຂວງ ຊຸດທີ II ຕິດພັນກັບການເກັບກຳບັນຫາຕ່າງໆ ຂອງປະຊາຊົນ ວິເຄາະວິໄຈ ຄຳເຫັນ ຂອງແນວລາວສ້າງຊາດ, ສະຫະພັນນັກຮົບເກົ່າ, ອົງການຈັດຕັ້ງມະຫາຊົນ ເພື່ອສົມທົບກັບອົງການປົກຄອງເມືອງ ຄົ້ນຄວ້າແກ້ ໄຂຄຳສະເໜີ, ສາຍດ່ວນ ໃຫ້ຖືກຕ້ອງສອດຄ່ອງ ແລະ ທັນເວລາ;

5.2) ຊຸກຍູ້ຄະນະສະມາຊິກສະພາປະຊາຊົນແຂວງ ປະຈຳເຂດເລືອກຕັ້ງເມືອງ ຕິດຕາມ, ຊຸກຍູ້ ອົງການປົກຄອງເມືອງ ຄົ້ນຄວ້າ, ພິຈາລະນາ ແລະ ແກ້ໄຂ ຄຳຮ້ອງ, ຄຳສະເໜີ ແລະ ສາຍດ່ວນ ຂອງຜູ້ມີສິດເລືອກຕັ້ງຢູ່ເຂດເລືອກຕັ້ງຂອງຕົນ ໃຫ້ຖືກຕ້ອງຕາມກົດໝາຍ, ນິຕິກຳໃຕ້ກົດໝາຍ ແລະ ທັນເວລາ;

5.3) ຊຸກຍູ້ ຄະນະສະມາຊິກສະພາປະຊາຊົນແຂວງ ປະຈຳເຂດເລືອກຕັ້ງເມືອງ ປັບປຸງກົນໄກ, ແບບແຜນວິທີເຮັດວຽກ ເປັນຕົ້ນແມ່ນ: ລະບອບປະຊຸມເດືອນ, ປະຈຳປີ, ກອງປະຊຸມຮ່ວມກັບອົງການປົກຄອງເມືອງ, ລະບອບລາຍງານ, ສ່ອງແສງ ແລະ ການສ້າງແຜນຕິດຕາມກວດກາໃນແຕ່ລະໄລຍະ.

6. ດ້ານການເຄື່ອນໄຫວວຽກງານຕ່າງປະເທດ.

ສືບຕໍ່ປະຕິບັດແນວທາງການຕ່າງປະເທດຂອງພັກ, ລັດ ໃນແຕ່ລະໄລຍະ; ເຂົ້າຮ່ວມ ແລະ ຕ້ອນຮັບການມາຢ້ຽມຢາມ ແລະ ເຮັດວຽກຂອງການນຳຂັ້ນສູງ ຂອງບັນດາປະເທດເພື່ອນມິດຍຸດທະສາດ ພາກພື້ນ ແລະ ສາກົນ ຕາມການເຊີນຂອງສະພາແຫ່ງຊາດ ແລະ ອົງການປົກຄອງແຂວງ; ປະກອບສ່ວນເປັນເຈົ້າພາບ ຈັດກອງປະຊຸມໃຫຍ່ລັດຖະສະພາ ລະຫວ່າງ ຊາດອາຊຽນ (AIPA) ຄັ້ງທີ 45 ແລະ ກອງປະຊຸມປິ່ນອ້ອມ; ເພີ່ມທະວີການຕິດຕາມກວດກາຊຸກຍູ້ການປະເມີນການຈັດຕັ້ງປະຕິບັດ ບົດບັນທຶກການຮ່ວມມື ລະຫວ່າງ ແຂວງໄຊຍະບູລີ ກັບ ບັນດາແຂວງຣຽກສ່ຽວ, ແຂວງມິດຕະພາບ ຮ່ວມມື ກັບ ບັນດາແຂວງ ສສ ຫວຽດນາມ ແລະ ກະກຽມຕ້ອນຮັບຄະນະຜູ້ແທນຈາກແຂວງແຮກສ່ຽວຂອງ ສສ ຫວຽດນາມ.

**ມາດຕາ 3 ການຈັດຕັ້ງປະຕິບັດ**

ຄະນະປະຈຳສະພາປະຊາຊົນແຂວງ, ສະມາຊິກສະພາປະຊາຊົນແຂວງ, ຄະນະກຳມະການ, ຄະນະເລຂາທິການ, ຄະນະສະມາຊິກສະພາປະຊາຊົນ ປະຈຳເຂດເລືອກຕັ້ງເມືອງ ແລະ ພາກສ່ວນກ່ຽວຂ້ອງ ຈົ່ງຮັບຮູ້ ແລະ ຈັດຕັ້ງປະຕິບັດມະຕິສະບັບນີ້ຢ່າງເຂັ້ມງວດ.

**ມາດຕາ 4 ຜົນສັກສິດ**

ມະຕິສະບັບນີ້ ມີຜົນສັກສິດນັບແຕ່ວັນລົງລາຍເຊັນເປັນຕົ້ນໄປ.

ປະທານສະພາປະຊາຊົນແຂວງ

ເພັງນິລັນ ຄຳພັນເພັງ